# ຂ້ອຍມີຮ້ານນ້ອຍຫຼັງໜຶ່ງ

ຮ້ານນ້ອຍເຊື່ອມຕໍ່ປະເທດກັບຄອບຄົວ, ຮ້ານນ້ອຍມີໂອກາດການຄ້າ ແລະ ມີເລື່ອງທີ່ດີ. ປີ 2024, ພວກເຮົາຈະກ້າວເຂົ້າສູ່ຮ້ານນ້ອຍຕ່າງໆຢູ່ປະເທດ ແລະ ຕົວເມືອງຕ່າງໆທີ່ລຽບຕາມ "ໜຶ່ງແລວ ໜຶ່ງເສັ້ນທາງ" ເພື່ອສັງເກດການພັດທະນາເສດຖະກິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ.

ຢູ່ແຂວງຢຸນນານ, ຮ້ານນ້ອຍບໍ່ພຽງແຕ່ເປັນຮ້ານຄ້າເທົ່ານັ້ນ, ແຕ່ຫາກຍັງໄດ້ສ່ອງແສງໃຫ້ເຫັນເຖິງ ວັດທະນະທຳທ້ອງຖິ່ນ ແລະ ວິຖີຊີວິດ; ເມື່ອເວົ້າເຖິງແຂວງຫູໜານ, ຮ້ານນ້ອຍ ທີ່ມີຄວາມຊີວິດຊີວາ ແລະ ເປັນຮ້ານແຟຊັນຕ່າງໆ ກໍແມ່ນນາມບັດທີ່ງາມສະຫງ່າ; ພວກເຮົາ ເດີນທາງໄປປະເທດລາວ ຕາມທາງລົດໄຟ ລາວ-ຈີນ, ໂອກາດການຄ້າຕ່າງໆ ກໍໄດ້ກຳເນີດເກີດຈາກຮ້ານນ້ອຍຕ່າງໆ.

ມື້ນີ້, ພວກເຮົາ ກ້າວເຂົ້າສູ່ຮ້ານນ້ອຍ ທີ່ຢູ່ແຂວງຢຸນນານ, ແຂວງຫູໜານ ແລະ ນະຄອນຫຼວງວຽງຈັນ ຂອງປະເທດລາວ ເພື່ອສຳຜັດກັບທັດສະນະຄິດປະດິດສ້າງ ແລະ ພະລັງງານຂອງຮ້ານເຫຼົ່ານີ້.

## ຮ້ານອາຫານມາປາງ: ຮ້ານທີ່ເກົ່າແກ່ນັບຮ້ອຍປີ ປະກົດມີຊີວິດຊີວາໃໝ່







ຕອນທ່ຽງ, ຮ້ານອາຫານມາປາງຮ້ອຍປີຫຼັງໜຶ່ງ ຢູ່ຕາແສງນ້ອຍນາເຕີລີ ນະຄອນຜູເອີແຂວງຢຸນນານມີລູກຄ້າເຕັມຮ້ານ. ນາງ ຈ້າວຢີ້ (Zhao Yi) ຜູ້ສືບທອດຮຸ່ນທີ 5 ຂອງ "ສີມືແຕ່ງອາຫານມາປາງ" ທີ່ເປັນມໍລະດົກວັດທະນະທຳນາມມະທຳ ນະຄອນຜູເອີ ພວມແຕ່ງອາຫານ "3 ອ້າຍນ້ອງມາປາງ" ແລະ "3 ເອື້ອຍນ້ອງມາປາງ" ຢູ່ໃນເຮືອນຄົວ. "3 ອ້າຍນ້ອງມາປາງ" ແມ່ນ ປີ້ງຊີ້ນງົວ, ຊີ້ນເອືອບ ແລະ ປີ້ງໄສ້ກອກ, "3 ເອື້ອຍນ້ອງມາປາງ" ແມ່ນຜັກກາດຂາວນ້ຳເຕົ້າຮູ້, ເຕົ້າຮວຍ ແລະ ກາກໝາກຖົ່ວ.

ຮ້ານຫຼັງນີ້ ຕັ້ງຢູ່ເມືອງປົກຄອງຕົນເອງເຜົ່າຮານີ-ເຜົ່າຢີໜິງເອີ ທີ່ເປັນສະຖານີແຫ່ງໜຶ່ງຕອນພາຍໃນປະເທດຈີນຂອງທາງລົດໄຟ ລາວ-ຈີນ. ພາຍຫຼັງເປີດນຳໃຊ້ທາງລົດໄຟລາວ-ຈີນ ແລ້ວ, ສະຖານີສຳຄັນຕາມ "ເສັ້ນທາງມ້າຊາ" (ເສັ້ນທາງບູຮານສຳລັບມ້າຕ່າງຂົນສິ່ງໃບຊາໃນສະໄໝບູຮານ) ແຫ່ງນີ້ ໄດ້ກາຍເປັນຊ່ອງທາງໃໝ່ແຫ່ງການເປີດປະຕູສູ່ພາຍນອກ ຂອງແຂວງຢຸນນານ, ອາຫານມາປາງ ກໍໄດ້ປາກົດມີຊີວິດຊີວາໃໝ່ ໃນສະໄໝໃໝ່.

ນາງ ຈ້າວຢີ້ ກ່າວວ່າ, ນັກທ່ອງທ່ຽວຈຳນວນບໍ່ໜ້ອຍ ໄດ້ມາຊີມອາຫານມາປາງ ຂອງຮ້ານເກົ່າແຫ່ງນີ້ ເປັນການສະເພາະ ເພື່ອຮັບຮູ້ປະຫວັດສາດຂອງເສັ້ນທາງບູຮານສຳລັບຕ່າງມ້າຂົນສິ່ງໃບຊາ ແລະ ປະຫວັດສາດຂອງອາຫານມາປາງ. ນັກທ່ອງທ່ຽວໄປທ່ຽວຕາແສງນ້ອຍນາເຕີລີແລ້ວ, ກໍສາມາດພັກຢູ່ໃນຣີສອດ ທີ່ເຕັມໄປດ້ວຍສີສັນຊົນເຜົ່າຢູ່ແຫ່ງນັ້ນ.

ນາງ ຈ້າວຢີ້ ກ່າວດ້ວຍຄວາມດີໃຈວ່າ: "ແຕ່ກ່ອນ, ນັກທ່ອງທ່ຽວສ່ວນຫຼາຍ ແມ່ນຂັບລົດມາທ່ຽວແຫ່ງນີ້, ແຕ່ເສັ້ນທາງອ່າວໄກ, ຂັບລົດມາກໍເມື່ອຍຫຼາຍ. ພາຍຫຼັງເປີດນຳໃຊ້ທາງລົດໄຟ ລາວ-ຈີນ ແລ້ວ, ໄດ້ອຳນວຍຄວາມສະດວກກວ່າເກົ່າ ໃນການເດີນທາງສຳລັບນັກທ່ອງທ່ຽວ ແລະ ກໍໄດ້ດຶງດູດນັກທ່ອງທ່ຽວມາທ່ຽວແຫ່ງນີ້ຫຼາຍກວ່າເກົ່າ, ໃນນັ້ນ, ກໍມີນັກທ່ອງທ່ຽວຈຳນວນບໍ່ໜ້ອຍ ຈາກລາວ ແລະ ໄທ ມາທ່ຽວຫຼິ້ນເຊັ່ນກັນ."

## ຮ້ານ "ຊາແຍນຢົ້ວເຊີ": ຮ້ານນ້ຳຊາຈີນແບບໃໝ່





ຢູ່ແຂວງຫູໜານ, ຮ້ານ "ຊາແຍນຢົ້ວເຊີ" ບໍ່ພຽງແຕ່ເປັນຮ້ານທີ່ມີຊື່ສຽງໂດ່ງດັງທາງອິນເຕີເນັດເທົ່ານັ້ນ, ແຕ່ຫາກຍັງໄດ້ຮັບຄວາມສົນໃຈຈາກວາລະສານຕ່າງປະເທດ ແລະ ນັກທ່ອງທ່ຽວຕ່າງປະເທດເອົາໃຈໃສ່ເປັນພິເສດ ແລະ ຖືກເປັນຍີ່ຫໍ້ດັງທີ່ເປັນຮ້ານນ້ຳຊາຈີນແບບໃໝ່.

ປີ 2013, ທ່ານ ຫຼຸຍລຽງ ໄດ້ເປີດຮ້ານຫຼັງທຳອິດຢູ່ສະໜາມຫຼວງຮວງຊິງ ນະຄອນສາງຊາ ແຂວງຫູໜານ, ໂດຍເນັ້ນຂາຍນ້ຳຊາຈີນແບບໃໝ່. ໃນໄລຍະຕົ້ນ, ມີພະນັກງານພຽງແຕ່ 3 ຄົນ ເທົ່ານັ້ນ, ເພື່ອດຶງດູດລູກຄ້າ, ພວກເຂົາເຈົ້າໄດ້ໂຄສະນາຂາຍເຄື່ອງດື່ມຫຼຸດລາຄາລົງເຄິ່ງໜຶ່ງ, ໄດ້ຍົກປ້າຍໂຄສະນາຂາຍຢູ່ຕາມທ້ອງຖະໜົນ, ເພື່ອໃຫ້ຜູ້ໂດຍສານລອງກິນ, ໃນທີ່ສຸດ, ໄດ້ຕ້ອນຮັບລູກຄ້າຊຸດທຳອິດ, ແຕ່ຍ້ອນວ່າໄດ້ໃສ່ນ້ຳຕານຫຼາຍເກີນໄປ, ເຮັດໃຫ້ລົດຊາດບໍ່ດີ, ໄດ້ເກີດສະພາບຫຼາຍຢ່າງໃນມື້ເປີດຮ້ານ. ເພື່ອຈູງໃຈລູກຄ້າຊຸດທຳອິດ, ທ່ານ ຫຼຸຍລຽງ (Lv Liang) ໄດ້ມອບຂອງທີ່ລະນຶກໃຫ້ລູກຄ້າທຸກຄົນໃນມື້ເປີດຮ້ານ ແລະ ແຖມຊານົມຈອກໜຶ່ງອີກ. ພາຍຫຼັງມາ, ໂດຍໄດ້ປັບປຸງຄຸນນະພາບຂອງເຄື່ອງດື່ມໃຫ້ດີຂຶ້ນ ແລະ ປັບປຸງການບໍລິການໃຫ້ດີຂຶ້ນ, ຮ້ານ "ຊາແຍນຢົ້ວເຊີ" ເລີ່ມມີຊື່ສຽງຂຶ້ນໃນຕະຫຼາດ.

ລູກຄ້າລົງທະບຽນຂອງຮ້ານ "ຊາແຍນຢົ້ວເຊີ" ຖືກເອີ້ນວ່າເປັນ "ສຽວຈູ" ແປວ່າ "ອື່ນາຍນ້ອຍ"; ເຄື່ອງດື່ມທຸກຊະນິດຈະມີຊື່ມ່ວນໆຄື: ລາເຕໂຢ່ລານ, ຊາອູລົງເຊິງເຊິງເປັນຕົ້ນ; ຮ້ານນີ້ໄດ້ຈັດໃຫ້ມີການໂຄສະນາຂາຍຕ່າງໆເຊັ່ນ: ສາມາດຕື່ມນ້ຳຊາໄດ້ ໂດຍບໍ່ຕ້ອງຈ່າຍເງິນອີກ, ສະສົມຄູປອງເພື່ອແລກເຄື່ອງດື່ມ ແລະ ມີຜະລິດຕະພັນທີ່ຫຼາກຫຼາຍສີສັນເປັນຕົ້ນ ໄດ້ເຮັດໃຫ້ຮ້ານຕົນມີຊື່ສຽງນັບມື້ນັບຫຼາຍຂຶ້ນ ແລະ ໄດ້ຮັບຄວາມນິຍົມຊົມຊອບຈາກລູກຄ້າເປັນພິເສດ.

ປີ 2019, ຮ້ານດັ່ງກ່າວໄດ້ໄປເປີດຮ້ານໃໝ່ຢູ່ນະຄອນອູຮັ້ນ ທາງພາກເໜືອ ແຂວງຫູໜານ ແລະ ນະຄອນເສີນເຈິ້ນ ທາງພາກໃຕ້ຈີນ. ທ່ານ ຫຼຸຍລຽງ ກ່າວວ່າ, ນ້ຳຊາ "ຊາແຍນຢົ້ວເຊີ" ເປັນຊາແບບຈີນ, ໂດຍໄດ້ຮັບຄວາມນິຍົມຊົມຊອບຈາກລູກຄ້າ ແມ່ນຍ້ອນວັດທະນະທຳແບບດັ້ງເດີມຂອງຈີນ.

## ຣີສອດ "ໄຕຢວນຢີ້ຈ້ານ": ບ່ອນພັກເຊົາຕາມເສັ້ນທາງທ່ອງທ່ຽວລາວ-ຈີນ





ຣີສອດ "ໄຕຢວນຢີ້ຈ້ານ" ຕັ້ງຢູ່ເຂດພູດອຍຂອງຕາແສງບໍ່ຫານ ເມືອງຫຼ້າ ກິ່ງແຂວງປົກຄອງຕົນເອງເຜົ່າລື້ ສິບສອງພັນນາ ແຂວງຢຸນນານ, ມີບັນຍາກາດທຳມະຊາດ ທີ່ສວຍງາມ, ການປະດັບປະດາຕາມຮີດຄອງປະເພນີຂອງເຜົ່າລື້ ໄດ້ດຶງດູດນັກທ່ອງທ່ຽວ ຈາກປະເທດຕ່າງໆໃນໂລກ.

ທ່ານ ຈູ່ເຈ່ຍຜິງ (Zhu Jiaping) ເຈົ້າຂອງຣີສອດ ເປັນຄົນນະຄອນຊຽງໄຮ້ ຈີນ, ແຕ່ກ່ອນ, ໄດ້ເຮັດທຸລະກິດຢູ່ນະຄອນຊຽງໄຮ້ ມາໂດຍຕະຫຼອດ. ປີ 2014, ຍ້ອນມີໂອກາດທີ່ດີ, ທ່ານ ໄດ້ຊື້ດິນຢູ່ຕາມບ້ານເຜົ່າລື້ ໃກ້ກັບຕາແສງບໍ່ຫານ ແລ້ວປຸກສ້າງຣີສອດຂອງຕົນ.

ທ່ານ ຈູ່ເຈ່ຍຜິງ ກ່າວວ່າ, ແຕ່ກ່ອນ, ຄົນທັງຫຼາຍບໍ່ຮູ້ວ່າບໍ່ຫານຢູ່ໃສ, ຄຽງຄູ່ກັບການເປີດນຳໃຊ້ທາງລົດໄຟລາວ-ຈີນ, ນັກທ່ອງທ່ຽວມາທ່ຽວບໍ່ຫານນັບມື້ນັບຫຼາຍຂຶ້ນ. ທ່ານ ຈູ່ເຈ່ຍຜິງ ກ່າວວ່າ: "ແຂກສ່ວນຫຼາຍແມ່ນສັ່ງຈອງຣີສອດ ຜ່ານທາງອິນເຕີເນັດ, ກໍມີນັກທ່ອງທ່ຽວອາເມຣິກາ ແລະ ເອີຣົບ ມາພັກເຊົາຢູ່ນີ້ເປັນປະຈຳ, ມີນັກທ່ອງທ່ຽວຫຼາຍຄົນ ກ່ອນຈະເດີນທາງໄປທ່ຽວປະເທດລາວ, ກໍມາພັກຢູ່ແຫ່ງນີ້." ທ່ານ ກ່າວວ່າ, ຈຸດປະສົງໃນການສ້າງຣີສອດແຫ່ງນີ້ ແມ່ນນັດໝູ່ເພື່ອນທັງຫຼາຍມາພັກເຊົາຢູ່ນີ້ ໃນເວລາມີອາຍຸສູງແລ້ວ, ພາຍຫຼັງມາ, ມີນັກທ່ອງທ່ຽວມາພັກຢູ່ນີ້ນັບມື້ນັບຫຼາຍຂຶ້ນຈົນບໍ່ມີ ຫ້ອງຮອງຮັບ.

ນາງ ວາງ ນັກທ່ອງທ່ຽວທີ່ມາຈາກແຂວງເຈີ້ຈຽງຈີນ ກ່າວວ່າ: "ພວກເຮົາ ກຽມຈະຂີ່ລົດໄຟ ລາວ-ຈີນ ໄປທ່ຽວ ປະເທດ ລາວ, ໄດ້ແວ່ຜ່ານບໍ່ຫານ, ໄດ້ສັ່ງຈອງ ຣີສອດ "ໄຕຢວນຢີ້ຈ້ານ" ຜ່ານທາງອິນເຕີເນັດ. ຣີສອດແຫ່ງນີ້ ມີສະພາບແວດລ້ອມທີ່ງຽບສະຫງົບ, ມີເຮືອນຮ້ານເຜົ່າລື້, ມີຕູບ ແລະ ສະລອຍນ້ຳ, ເຈົ້າຂອງ ຍັງຊ່ວຍແຂກແລ່ນເອກະສານໄປທ່ຽວປະເທດລາວ ອີກດ້ວຍ."

ທ່ານ ຈູ່ເຈ່ຍຜິງ ກ່າວວ່າ, ໃນອະນາຄົດ, ທ່ານ ຫວັງວ່າ, ຣີສອດ "ໄຕຢວນຢີ້ຈ້ານ" ຈະກາຍເປັນບ່ອນພັກເຊົາຂອງນັກທ່ອງທ່ຽວລາວ ທີ່ເຂົ້າມາທ່ຽວປະເທດຈີນ ແລະ ນັກທ່ອງທ່ຽວຈີນ ທີ່ໄປທ່ຽວປະເທດລາວໃຫ້ນັບມື້ນັບຫຼາຍຂຶ້ນ.

## ບໍລິສັດການຄ້າຂາເຂົ້າຂາອອກສຽວພ້າງ: ຮ້ານ "ສວຍງາມທີ່ສຸດ" ຂອງລາວ






"ຮ້ານເຮົາເປັນຮ້ານທີ່ສວຍງາມທີ່ສຸດ ໃນປະເທດລາວ." ຮ້ານຊ່ວຍຊື້ເຄື່ອງສຳອາງສາກົນສຽວພ້າງ ທີ່ຕັ້ງຢູ່ນະຄອນຫຼວງວຽງຈັນ ທີ່ມີຊື່ລືນາມຫຼາຍໃນຊຸມປີຜ່ານມາ. ເມື່ອເວົ້າເຖິງຮ້ານຕົນ, ທ່ານ ຕິ່ງຢີ່ຝານ (Ding Yifan) ເຈົ້າຂອງຮ້ານເວົ້າດ້ວຍຄວາມໝັ້ນໃຈ ວ່າ: "ພວກເຮົາ ສາມາດນຳເຂົ້າສິນຄ້າທີ່ດີ ຈາກບັນດາປະເທດອາຊີຕາເວັນອອກສຽງໃຕ້ ເຂົ້າປະເທດລາວ ແລະ ສົ່ງອອກຜະລິດຕະພັນທີ່ດີຂອງປະເທດລາວໄປສູ່ໂລກ."

ປີ 2013, ທ່ານ ຕິ່ງຢີ່ຝານ ໄດ້ເດີນທາງໄປເຖິງປະເທດລາວ, ພາຍຫຼັງຄົ້ນຄວ້າຢ່າງລະອຽດແລ້ວເຫັນວ່າ, ຄົນລາວສ່ວນຫຼາຍມັກແຕ່ງໜ້າແຕ່ງຕົວເປັນພິເສດ, ຊາວຕ່າງປະເທດທີ່ດຳລົງຊີວິດຢູ່ລາວ ກໍມີຄວາມຕ້ອງການດ້ານການບໍລິໂພກໃນດ້ານນີ້ຢ່າງແຂງແຮງ, "ຂ້ອຍເລີຍຕັດສິນເຮັດທຸລະກິດຊື້ເຄື່ອງສຳອາງຈາກປະເທດໄທເຂົ້າມາລາວ."

ພາຍຫຼັງເປີດບໍລິການແລ້ວ, ຮ້ານຊ່ວຍຊື້ເຄື່ອງສຳອາງສາກົນສຽວພ້າງ ຢຶດໝັ້ນຂາຍສິນຄ້າແທ້ ແລະ ສິນຄ້າຄຸນນະພາບດີ, ນອກນີ້, ຍັງໄດ້ປັບປຸງການບໍລິການຂອງຮ້ານເລື້ອຍໆ, ບໍ່ພໍເທົ່າໃດ, ຮ້ານນີ້ ກໍໄດ້ຮັບການຕີລາຄາສູງຈາກລູກຄ້າຢ່າງເປັນເອກະພາບກັນ, ຍັງໄດ້ເຊີນຊວນດາລາຫຼາຍທ່ານຂອງປະເທດລາວ ມາໂຄສະນາຮ້ານ, ທຸລະກິດຂອງຮ້ານນັບມື້ນັບດີຂຶ້ນ.

ປັດຈຸບັນ, ຮ້ານຊ່ວຍຊື້ເຄື່ອງສຳອາງສາກົນສຽວພ້າງ ໄດ້ເປີດຮ້ານຂາຍເຄື່ອງສຳອາງຂະໜາດໃຫຍ່ຢູ່ຫຼາຍປະເທດ ເຊັ່ນ: ມຽນມາ, ກຳປູເຈຍ ເປັນຕົ້ນ. ບໍ່ພຽງແຕ່ໄດ້ຂາຍເຄື່ອງສຳອາງຈາກປະເທດໄທ ແລະ ສາທາລະນະລັດເກົາຫຼີ ທີ່ໄດ້ຮັບຄວາມນິຍົມຈາກລູກຄ້າເທົ່ານັ້ນ, ແຕ່ຫາກຍັງເປັນຕົວແທນຈຳໜ່າຍຢຸກຢາທີ່ມີຊື່ສຽງຂອງປະເທດໄທ ອີກດ້ວຍ.

ທ່ານ ຕິ່ງຢີ່ຝານ ກ່າວວ່າ: "ຈີນມີຕະຫຼາດທີ່ກວ້າງໃຫຍ່ໄພສານ ແລະ ມີຄວາມບິ່ນຊ້ອນຫຼາຍ, ທາງລົດໄຟ ລາວ-ຈີນ ໄດ້ຫຼຸດຕົ້ນທຶນການຂົນສົ່ງສິນຄ້າ ຈາກ ສປປ ລາວ ເຂົ້າໄປຈີນ. ພວກເຮົາຈະສືບຕໍ່ຄົ້ນຄວ້າຕະຫຼາດຈີນຕື່ມອີກ ແລະ ຕັ້ງໜ້າຍົກລະດັບຂອງຜະລິດຕະພັນໃຫ້ສູງຂຶ້ນ, ທຳການກະກຽມເພື່ອຈະສົ່ງຜະລິດຕະພັນເຂົ້າສູ່ຕະຫຼາດຈີນ ໃນອະນາຄົດ." ທ່ານ ຕິ່ງຢີ່ຝານ ກ່າວຕື່ມວ່າ, ໃນອະນາຄົດ ຫວັງວ່າ, ບໍລິສັດຕົນ ຈະສາມາດນຳເອົາເຄື່ອງສຳອາງທີ່ດີຂອງຈີນ ເຂົ້າມາປະເທດລາວ ໂດຍຜ່ານທາງລົດໄຟ ລາວ-ຈີນ ແລະ ຈະສົ່ງສິນຄ້າທີ່ມີຄຸນນະພາບດີຂອງບັນດາປະເທດອາຊີຕາເວັນອອກສຽງໃຕ້ເຂົ້າສູ່ປະເທດຈີນເຊັ່ນກັນ.

ແຫຼ່ງຂ່າວ: Wang Huan, Jiang Shiyu, He Ting, Zhang Yong, Li Tong, Na Diya, ຮູບສະໜອງໂດຍ: ໜັງສືພິມລາຍວັນຢຸນນານ, ໜັງສືພິມລາຍວັນຫູໜານ

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສຽງໃຕ້ ແຂວງຢຸນນານ)

ynzhanba@163.com
laos.yunnangateway.com